LOCA Becomes First Lao Company to Apply for Green Bonds





Vientiane, September 9, 2025 — The Lao capital market marked a historic milestone this week as **LOCA Company Limited** became the first domestic enterprise to seek regulatory approval for the issuance of **green bonds**.

The company formally lodged its application with the **Lao Securities Commission Office (LSCO)** on September 3, followed by the submission of feasibility documentation to the **Lao Securities Exchange (LSX)** on September 8.

Established in 2018 as a clean-energy startup, LOCA operates an **electric taxi ride-hailing platform** alongside a rapidly expanding network of **EV charging stations**. Since launching its first charging site in May 2022, the company has grown to **50 stations across 11 provinces**, with further nationwide expansion underway.

Recognizing the promising opportunities in its business operations and with the aim of promoting the use of clean energy, coupled with a firm commitment to contributing to national and regional environmental sustainability policies, LOCA has planned the issuance of Green Bonds valued at USD 2,400,000 and LAK 2,200,000,000 to raise capital for business expansion in 2025 and 2026. The proceeds from this Green Bond issuance will be allocated to the installation of an additional 15–30 EV charging sites (approximately 60 outlets), the acquisition of 20 more LOCA Mini EVs, and the remainder will be utilized as working capital for the company.

The green bond initiative has received strong support from both the **LSCO** and the **Asian Development Bank (ADB)**, which have provided technical guidance on structuring sustainable securities. Market observers anticipate that the issuance will **enhance investor confidence**, **strengthen the credibility of the Lao capital market**, and **attract greater participation from both domestic and international investors**.

To facilitate the issuance, LOCA has appointed **BCEL-KT Securities Company Limited**, **LDB Securities Sole Company Limited**, and **Lao-China Securities Public Company** to serve as **Financial Advisors and Selling Agents** for the Green Bond.

ໂລກ້າ ກາຍເປັນບໍລິສັດລາວທຳອິດທີ່ຍື່ນຂໍອອກຮຸ້ນກູ້ສີຂຽວ

ນະຄອນຫຼວງວຽງຈັນ, 9 ກັນຍາ 2025 — ຕະຫຼາດທຶນລາວໄດ້ສ້າງປະຫວັດສາດຄັ້ງສຳຄັນເມື່ອ ບໍລິສັດ ໂລກ້າ ຈຳກັດ ກາຍເປັນບໍລິສັດພາຍໃນປະເທດລາວທີ່ຍື່ນຂໍອະນຸຍາດເພື່ອອອກຈຳໜ່າຍ ຮຸ້ນກູ້ສີຂຽວ ບໍລິສັດທຳອິດ.

ບໍລິສັດໄດ້ຍື່ນຄຳຮ້ອງຢ່າງເປັນທາງການຕໍ່ ສຳນັກງານຄະນະກຳມະການຫຼັກຊັບ (ສຄຄຊ) ໃນວັນທີ 3 ກັນຍາ ແລະໄດ້ສົ່ງ ເອກະສານທົບທວນຄວາມເປັນໄປໄດ້ໃຫ້ແກ່ ຕະຫຼາດຫຼັກຊັບລາວ (ຕລຊລ) ໃນວັນທີ 8 ກັນຍາ.

ສ້າງຕັ້ງໃນປີ 2018 ໃນຖານະສະຕາດອັບພະລັງງານສະອາດ, ໂລກ້າໄດ້ດຳເນີນທຸລະກິດ ບໍລິການແທັກຊີໄຟຟ້າແບບອອນ ລາຍ (Electric Taxi Ride-Hailing) ພ້ອມທັງຂະຫຍາຍເຄືອຂ່າຍສະຖານີສາກລົດໄຟຟ້າ (EV Charging Station) ຢ່າງໄວວາ. ນັບແຕ່ເປີດບໍລິການສະຖານີສາກແຫ່ງທຳອິດໃນເດືອນພຶດສະພາ 2022 ຈົນມາເຖິງປັດຈຸບັນ, ບໍລິສັດໄດ້ ຂະຫຍາຍຈຳນວນສະຖານີສາກລົດໄຟຟ້າເຖິງ 50 ສະຖານີ ຄອບຄຸມ 11 ແຂວງ, ແລະ ຍັງມີແຜນຂະຫຍາຍເພີ່ມເຕີມທົ່ວ ປະເທດ.

ເນື່ອງຈາກໄດ້ເຫັນເຖິງໂອກາດໃນການດຳເນີນທຸລະກິດທີ່ສົດໃສ ແລະ ເພື່ອການສົ່ງເສີມການນຳໃຊ້ພະລັງງານສະອາດ ບວກກັບເຈດຈຳນົງທີ່ຈະປະກອບສ່ວນໃນການຈັດຕັ້ງນະໂຍບາຍຮັກສາສະພາບແວດລ້ອມພາຍໃນປະເທດ ແລະ ພາກ ພື້ນ, LOCA ໄດ້ວາງແຜນການອອກຈຳໜ່າຍຮຸ້ນກູ້ສີຂຽວໃນຄັ້ງນີ້ທີ່ ມີມູນຄ່າ 2,400,000 ໂດລາສະຫະລັດ ແລະ 2,200,000,000 ກີບ ເພື່ອລະດົມທຶນສຳລັບການຂະຫຍາຍທຸລະກິດໃນປີ 2025 ແລະ 2026. ເງິນທຶນທີ່ໄດ້ຈາກການ ອອກຮຸ້ນກູ້ສີຂຽວ ຈະນຳໃຊ້ໃນການຕິດຕັ້ງຕູ້ສາກລົດໄຟຟ້າເພີ່ມອີກ 15-30 ຈຸດ (ປະມານ 60 ຫົວສາກ) ແລະ ຈັດຊື້ລົດ LOCA Mini ເພີ່ມອີກ 20 ຄັນ ແລະ ສ່ວນທີ່ເຫຼືອຈະນຳໃຊ້ເປັນທຶນໝຸນວຽນຂອງບໍລິສັດ.

ໂຄງການຮຸ້ນກູ້ສີຂຽວນີ້ ໄດ້ຮັບການສະໜັບສະໜຸນຢ່າງສູງຈາກ ສຄຄຊ ແລະ ທະນາຄານພັດທະນາອາຊີ (ADB) ໂດຍ ໄດ້ມີການໃຫ້ຄຳແນະນຳທາງເຕັກນິກໃນການຈັດໂຄງສ້າງຫຼັກຊັບຢ່າງຍືນຍົງ ຊຶ່ງຄາດວ່າການອອກຮຸ້ນກູ້ຄັ້ງນີ້ ຈະຊ່ວຍ ເພີ່ມຄວາມໝັ້ນໃຈໃຫ້ຜູ້ລົງທຶນ, ສ້າງຄວາມໜ້າເຊື່ອຖືໃຫ້ຕະຫຼາດທຶນລາວ ແລະ ດຶງດູດການມີສ່ວນຮ່ວມຈາກຜູ້ລົງ ທຶນທັງໃນ ແລະ ຕ່າງປະເທດ.

ເພື່ອສະໜັບສະໜຸນການອອກຮຸ້ນກູ້ສີຂຽວ, ໂລກ້າໄດ້ແຕ່ງຕັ້ງ ບໍລິສັດ ຫຼັກຊັບ ທຄຕລ-ກທ ຈຳກັດ (BCEL-KT), ບໍລິສັດ ຫຼັກຊັບ ແອລ໌ດີບີ ຈຳກັດຜູ້ດຽວ (LDB-S) ແລະ ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ (LCS) ເຮັດໜ້າທີ່ ເປັນທີ່ປຶກສາດ້ານການເງິນ ແລະ ຕົວແທນຈຳໜ່າຍ ສຳລັບຮຸ້ນກູ້ສີຂຽວໃນຄັ້ງນີ້.